ສຳນັກງານໃຫຍ່

ເລກທີ: 21 /ທຄຕລ 2021

ນະຄອນຫຼວງວຽງຈັນ, ວັນທີ: 29.OCT.2021

# ມະຕິ

## ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2021.

ກອງປະຊຸມຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຖືກຈັດຂຶ້ນໃນເວລາ 14:30 ໂມງ ຫາ 15:00 ໂມງ ຂອງວັນທີ 29 ຕຸລາ 2021 ທີ່ຫ້ອງປະຊຸມ ຊັ້ນ 3 ໂຮງແຮມເມືອງແທ່ງ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 19 ທ່ານ, ຜູ້ມອບສິດຈຳນວນ 163 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 153.161.186 ຮຸ້ນ, ນັບທັງ 2.702.001 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 73,733% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 54.562.114 ຮຸ້ນ ເທົ່າກັບ 26,267% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

### ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

**ວາລະທີ 1: ຮັບຮອງບົດບັນທຶກຂອງກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020.**

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 153.161.186 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2: ຮັບຊາບການລາຍງານ ຜົນການດຳເນີນງານຂອງ ທຄຕລ ໄລຍະ 6 ເດືອນ ປີ 2021;**

ໝາຍເຫດ: ວາລະນີ້ ເປັນພຽງການລາຍງານເພື່ອຊາບ, ບໍ່ຈຳເປັນມີການລົງຄະແນນສຽງ.

**ວາລະທີ 3: ຮັບຮອງການດັດແກ້ແຜນການປີ 2021 ຂອງ ທຄຕລ:**

1. **ດັດແກ້ແຜນທຸລະກິດ,** ມີລາຍການສຳຄັນດັ່ງນີ້:
- ຍອດຊັບສິນ/ໜີ້ສິນ: ຈາກແຜນເດີມ 56.893,30 ຕື້ກີບ, ເປັນ 62.298,80 ຕື້ກີບ;
- ຍອດເງິນຝາກ: ຈາກແຜນເດີມ 50.300,00 ຕື້ກີບ, ເປັນ 56.000,00 ຕື້ກີບ;
- ຍອດເງິນກູ້ທັງໝົດ: ຈາກແຜນເດີມ 29.743,00 ຕື້ກີບ, ເປັນ 24.627,00 ຕື້ກີບ;
- ກຳໄລກ່ອນອາກອນ: ຈາກແຜນເດີມ 314,00 ຕື້ກີບ, ເປັນ **26,00** ຕື້ກີບ;
2. **ແຜນຮັບພະນັກງານໃໝ່**: ບໍ່ຮັບພະນັກງານ (ຈາກເບື້ອງຕົ້ນຂຶ້ນແຜນປະກອບພະນັກງານໃໝ່ ທົ່ວລະບົບຈຳນວນ 87 ຄົນ);



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

3. **ແຜນການຂະຫຍາຍຕາໜ່າງບໍລິການ:** ຍົກເລີກແຜນຂະຫຍາຍໜ່ວຍບໍລິການ (ຈາກແຜນເດີມຂຶ້ນແຜນຂະຫຍາຍ 8 ໜ່ວຍບໍລິການ) ແລະ ຍົກເລີກແຜນການສ້າງຕັ້ງສາຂາໄຊສົມບູນ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 153.161.186 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 4: ຮັບຮອງການແຕ່ງຕັ້ງສະພາບໍລິຫານຊຸດໃໝ່ຂອງ ທຄຕລ:**

ສະພາບໍລິຫານຊຸດໃໝ່ຂອງ ທຄຕລ ປະກອບດ້ວຍສະມາຊິກ 9 ທ່ານ, ມີອາຍຸການ 2 ປີ ນັບແຕ່ຖືກຮັບຮອງຈາກກອງປະຊຸມຄັ້ງນີ້ ຕາມລາຍຊື່ດັ່ງລຸ່ມນີ້:

1. ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ — ຮອງລັດຖະມົນຕີກະຊວງການເງິນ, ປະທານ
2. ທ່ານ ຄຳສຸກ ສູນດາລາ — ສະມາຊິກອິດສະລະ, ຮອງປະທານ
3. ທ່ານ ຄຳພຸດ ສິດທິລາດ — ຜູ້ອຳນວຍການ ທຄຕລ, ສະມາຊິກ
4. ທ່ານ ປະສົມເພັດ ຄຳຕັນ — ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ-ປະກັນໄພ ກະຊວງການເງິນ, ສະມາຊິກ
5. ທ່ານ ສະຕີເຟັນ ມັງເຈຍວາກາ (Stephane Mangiavacca) ຕາງໜ້າ COFIBRED, ສະມາຊິກ
6. ທ່ານ ຣສ. ທອງເພັດ ຈັນທະນິວົງ — ຮອງຄະນະບໍດີຄະນະເສດຖະສາດແລະບໍລິຫານທຸລະກິດ; ສະມາຊິກອິດສະລະ
7. ທ່ານ ນ. ລັດດາວັນ ຊົງວິໄລ — ຮັກສາການຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກແລະປັບປຸງໂຄງສ້າງເສດຖະກິດ; ສະມາຊິກອິດສະລະ
8. ທ່ານ ສອນໄຊ ສີລາເພັດ — ຮອງປະທານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ສະມາຊິກອິດສະລະ;
9. ທ່ານ ວຽງສຸກ ຈຸນທະວົງ — ຮອງຜູ້ອຳນວຍການ ທຄຕລ, ສະມາຊິກ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 153.161.186 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ**

**ບຸນເຫຼືອ ສິນໄຊວໍຣະວົງ**